ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBILC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ເລກທີ 2902 /ທຄຕລ. 2026...

ນະຄອນຫຼວງວຽງຈັນ, ວັນທີ... 18 AUG 2026.

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍ.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາບຳລຸງຮັກສາເຄື່ອງຈັກປັ່ນໄຟຟ້າສຳຮອງໃຫ້ກັບສາຂາ ທຄຕລ ທົ່ວລະບົບ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍ, ເພື່ອເຂົ້າຮ່ວມປະມູນລາຄາໃນການບໍລິການບຳລຸງຮັກສາເຄື່ອງຈັກປັ່ນໄຟຟ້າສຳຮອງໃຫ້ກັບ ສາຂາ ທຄຕລ ທົ່ວລະບົບ ເພື່ອຮັບປະກັນການໃຊ້ງານຂອງລະບົບໄຟຟ້າ. ດັ່ງນັ້ນ, ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນລາຄາ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

## I. ລາຍການເຄື່ອງ ຈັກປັ່ນໄຟຟ້າສຳຮອງ ຈຳນວນ 54ໜ່ວຍ ດັ່ງນີ້:

| ລ/ດ | ສະຖານທີ | ຂະໜາດຈັກ | ເຄື່ອງຈັກ | ສະຖານະ |
|---|---|---|---|---|
| | **ແຂວງ ຫຼວງນໍ້າທາ** | | | |
| 1 | ສາຂາ ຫຼວງນໍ້າທາ | 55KVA 44KW | kipor | ພ້ອມໃຊ້ງານ |
| 2 | ໜ່ວຍບໍລິການບໍ່ເຕັນ | 50KVA 40KW | cummin | ພ້ອມໃຊ້ງານ |
| 3 | ໜ່ວຍບໍລິການເມືອງສິງ | 50KVA 40KW | cummin | ພ້ອມໃຊ້ງານ |
| | **ແຂວງ ບໍ່ແກ້ວ** | | | |
| 4 | ສາຂາ ບໍ່ແກ້ວ | 100KVA 80KW | cummin | ພ້ອມໃຊ້ງານ |
| 5 | ໜ່ວຍບໍລິການຫ້ວຍຊາຍ | 55KVA 44KW | kipor | ພ້ອມໃຊ້ງານ |
| 6 | ໜ່ວຍບໍລິການເມືອງຕົ້ນເຜິ້ງ | 30KVA 24KW | isuzu | ພ້ອມໃຊ້ງານ |
| | **ແຂວງ ອຸດົມໄຊ** | | | |
| 7 | ສາຂາ ອຸດົມໄຊ | 50KVA 40KW | perkin | ພ້ອມໃຊ້ງານ |
| 8 | ໜ່ວຍບໍລິການເມືອງຮຸນ | 33KVA 20KW | perkin | ພ້ອມໃຊ້ງານ |
| 9 | ໜ່ວຍບໍລິການນາໝໍ້ | 30KVA 44KW | cummin | ພ້ອມໃຊ້ງານ |
| | **ແຂວງ ຜົ້ງສາລີ** | | | |
| 10 | ສາຂາ ຜົ້ງສາລີ | 60KVA 40KW | Denyo | ພ້ອມໃຊ້ງານ |
| 11 | ໜ່ວຍບໍລິການເມືອງບຸນໃຕ້ | 30KVA 24KW | Denyo | ພ້ອມໃຊ້ງານ |
| 12 | ໜ່ວຍບໍລິການພູຟ້າ | 50KVA 40KW | cummin | ພ້ອມໃຊ້ງານ |
| 13 | ໜ່ວຍບໍລິການເມືອງຂວາ | 50KVA 40KW | cummin | ພ້ອມໃຊ້ງານ |



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

| | | | | |
|---|---|---|---|---|
| | **ແຂວງ ຫົວພັນ** | | | |
| 14 | ສາຂາ ຫົວພັນ | 100KVA 80KW | cummin | ພ້ອມໃຊ້ງານ |
| 15 | ໜ່ວຍບໍລິການເມືອງວຽງໄຊ | 100KVA 80KW | Denyo | ພ້ອມໃຊ້ງານ |
| 16 | ໜ່ວຍບໍລິການເມືອງຫົວສິບເປົາ | 30KVA 24KW | isuzu | ພ້ອມໃຊ້ງານ |
| | **ແຂວງ ຊຽງຂວາງ** | | | |
| 17 | ສາຂາ ຊຽງຂວາງ ບ ໂພນສະຫວັນ | 132KVA 106KW | john deere | ພ້ອມໃຊ້ງານ |
| 18 | ໜ່ວຍບໍລິການເມືອງຄູນ | 30KVA 24KW | isuzu | ພ້ອມໃຊ້ງານ |
| 19 | ໜ່ວຍບໍລິການເມືອງຄຳ | 100KVA 80KW | kipor | ພ້ອມໃຊ້ງານ |
| | **ແຂວງ ຫຼວງພະບາງ** | | | |
| 20 | ສາຂາຫຼວງພະບາງ | 55KVA 44KW | kipor | ພ້ອມໃຊ້ງານ |
| | **ແຂວງ ໄຊຍະບູລີ** | | | |
| 21 | ສາຂາ ໄຊຍະບູລີ | 132KVA 106KW | john deere | ພ້ອມໃຊ້ງານ |
| 22 | ໜ່ວຍບໍລິການຫົງສາ | 60KVA 48KW | Denyo | ພ້ອມໃຊ້ງານ |
| 23 | ໜ່ວຍບໍລິການແກ່ນທ້າວ | 50KVA 40KW | cummin | ພ້ອມໃຊ້ງານ |
| 24 | ໜ່ວຍບໍລິການປາກລາຍ | 55KVA 44KW | kipor | ພ້ອມໃຊ້ງານ |
| | **ແຂວງ ວຽງຈັນ** | | | |
| 25 | ສາຂາ ວັງວຽງ | 125KVA 100KW | cummin | ພ້ອມໃຊ້ງານ |
| 26 | ໜ່ວຍບໍລິການເມືອງເຟືອງ | 50KVA 40KW | perkin | ພ້ອມໃຊ້ງານ |
| 27 | ໜ່ວຍບໍລິການເມືອງກາສີ | 60KVA 48KW | kipor | ພ້ອມໃຊ້ງານ |
| | **ແຂວງ ວຽງຈັນ** | | | |
| 28 | ສາຂາ ໂພນໂຮງ | 30KVA 24KW | isuzu | ພ້ອມໃຊ້ງານ |
| 29 | ໜ່ວຍບໍລິການຊະນະຄາມ | 30KVA 24KW | cummin | ພ້ອມໃຊ້ງານ |
| 30 | ໜ່ວຍບໍລິການທຸລະຄົມ | 30KVA 24KW | cummin | ພ້ອມໃຊ້ງານ |
| 31 | ໜ່ວຍບໍລິການ ຫຼັກ52 | 55KVA 44KW | cummin | ພ້ອມໃຊ້ງານ |
| | **ແຂວງ ຈຳປາສັກ** | | | |
| 32 | ສາຂາ ຈຳປາສັກ | 250KVA 200KW | cummin | ພ້ອມໃຊ້ງານ |
| 33 | ໜ່ວຍບໍລິການທ່າຫີນ | 60KVA 48KW | isuzu | ພ້ອມໃຊ້ງານ |
| 34 | ໜ່ວຍບໍລິການຫລັກ8 | 30KVA 24KW | perkin | ພ້ອມໃຊ້ງານ |
| 35 | ໜ່ວຍບໍລິການປາກຊ່ອງ | 60KVA 48KW | isuzu | ພ້ອມໃຊ້ງານ |
| 36 | ໜ່ວຍບໍລິການເມືອງໂຂງ | 30KVA 24KW | cummin | ພ້ອມໃຊ້ງານ |
| | **ແຂວງ ສາລະວັນ** | | | |
| 37 | ສາຂາ ສາລະວັນ | 150KVA 120KW | cummin | ພ້ອມໃຊ້ງານ |
| 38 | ໜ່ວຍບໍລິການເມືອງເລົ່າງາມ | 30KVA 24KW | isuzu | ພ້ອມໃຊ້ງານ |
| 39 | ໜ່ວຍບໍລິການຄົງເຊໂດນ | 50KVA 40KW | cummin | ພ້ອມໃຊ້ງານ |
| | **ແຂວງ ເຊກອງ** | | | |
| 40 | ສາຂາ ເຊກອງ(ລະມ່າມ) | 250KVA 200KW | cummin | ພ້ອມໃຊ້ງານ |
| 41 | ໜ່ວຍບໍລິການທ່າແຕງ | 60KVA 48KW | hino | ພ້ອມໃຊ້ງານ |
| 42 | ໜ່ວຍບໍລິການດາກຈຶງ | 30KVA 24KW | cummin | ພ້ອມໃຊ້ງານ |
| | **ແຂວງ ອັດຕະປື** | | | |
| 43 | ສາຂາ ແຂວງອັດຕະປື | 132KVA 106KW | john deere | ພ້ອມໃຊ້ງານ |
| | **ແຂວງ ສະຫວັນນະເຂດ** | | | |

| | | | | |
|---|---|---|---|---|
| 44 | ສາຂາ ສະຫວັນນະເຂດ | 60KVA 48KW | isuzu | ພ້ອມໃຊ້ງານ |
| 45 | ໜ່ວຍບໍລິການສົມວິລະບູລີ | 50KVA 40KW | cummin | ພ້ອມໃຊ້ງານ |
| 46 | ໜ່ວຍບໍລິການລາວບາວ | 30KVA 24KW | isuzu | ພ້ອມໃຊ້ງານ |
| 47 | ໜ່ວຍບໍລິການເມືອງປະທຸມພອນ | 60KVA 48KW | hino | ພ້ອມໃຊ້ງານ |
| | **ແຂວງຄໍາມ່ວນ** | | | |
| 48 | ສາຂາ ຄໍາມ່ວນ | 150KVA 120KW | cummin | ພ້ອມໃຊ້ງານ |
| 49 | ໜ່ວຍບໍລິການຍົມມະລາດ | 60KVA 48KW | isuzu | ພ້ອມໃຊ້ງານ |
| 50 | ໜ່ວຍບໍລິການຫີນບູນ | 30KVA 24KW | cummin | ພ້ອມໃຊ້ງານ |
| | **ແຂວງ ບໍລິຄໍາໄຊ** | | | |
| 51 | ສາຂາ ບໍລິຄໍາໄຊ | 150KVA 120KW | john deere | ພ້ອມໃຊ້ງານ |
| 52 | ໜ່ວຍບໍລິການຫລັກຊາວ | 50KVA 40KW | cummin | ພ້ອມໃຊ້ງານ |
| 53 | ໜ່ວຍບໍລິການທາງແບ່ງຫລັກຊາວ | 50KVA 40KW | cummin | ພ້ອມໃຊ້ງານ |
| | **ນະຄອນຫຼວງວຽງຈັນ** | | | |
| 54 | ສາຂາ ດົງໂດກ | 100KVA 80KW | cummin | ພ້ອມໃຊ້ງານ |

❖ **<u>ໝາຍເຫດ:</u>** ບໍລິສັດສາມາດເຂົ້າມາສໍາຫລວດ ແລະ ສອບຖາມຂໍ້ມູນໄດ້ ນັບຕັ້ງແຕ່ ວັນທີ 20/08/2026 ເຖິງ 17/09/2026 ໃນວັນເວລາໂມງລັດຖະການ.

II. **ເງື່ອນໄຂ ແລະ ຂອບເຂດໜ້າທີ່ຂອງຜູ້ໃຫ້ບໍລິການໃນການບໍາລຸງຮັກສາ ມີດັ່ງນີ້:**

**1) ເງື່ອນໄຂຜູ້ໃຫ້ບໍລິການ:**

1. ຕ້ອງເປັນບໍລິສັດທີ່ມີປະສົບການ, ມີຜົນງານການຕິດຕັ້ງ ແລະ ບໍາລຸງຮັກສາໃຫ້ບັນດາອົງກອນ ຫຼື ໂຄງການຢ່າງໜ້ອຍ 03 ປີຂຶ້ນໄປ.
2. ຕ້ອງມີພະນັກງານຊັບພອດແກ້ໄຂບັນຫາເຕັກນິກຂອງບໍລິສັດເອງ ຢ່າງໜ້ອຍ 1 ຄົນຂຶ້ນໄປ.
3. ສາມາດໃຫ້ການຊັບພອດແກ້ໄຂບັນຫາຜ່ານທາງ Online ແລະ On site ບໍ່ເກີນ 03ວັນ ສໍາລັບຕ່າງແຂວງ ແລະ ບໍ່ເກີນ 01ຊົ່ວໂມງ ສໍາລັບນະຄອນຫຼວງວຽງຈັນ (ບໍລິສັດກໍານົດມາ).
4. ຕ້ອງຕິດຄັດມາດຖານເຕັກນິກຂອງໜ້າວຽກທີ່ຕິດພັນກັບການບໍາລຸງຮັກສາມາພ້ອມ.

**2) ຂອບເຂດໜ້າທີ່ຜູ້ໃຫ້ບໍລິການ:**

❖ **ຈັກປັ່ນໄຟຟ້າສໍາຮອງ (Generator) :**

1. ໃຫ້ການບໍາລຸງຮັກສາ.
2. ຊັບພອດແກ້ໄຂບັນຫາເຕັກນິກ
3. ລາຍງານສະພາບເຄື່ອງ Generator ຢ່າງເປັນປະຈໍາພາຍຫລັງທີ່ເຮັດ MA ສໍາເລັດ.
4. ກວດເຊັກໄຟຟ້າຂາເຂົ້າ-ຂາອອກ, ລະບົບສາຍດິນ ຂອງ Generator.
5. ບັນທຶກລາຍລະອຽດຕ່າງໆທີ່ຕິດພັນກັບຕົວເຄື່ອງ.
6. ກວດເຊັກພື້ນຖານຂອງເຄື່ອງ ເຊັ່ນ: ການຕັ້ງຄ່າຂອງເຄື່ອງ, ການອັບເກຼດ Firmware ແລະ ອື່ນໆ ຕາມມາດຕະຖານເຕັກນິກ.
7. ກວດ Log ຍ້ອນຫຼັງ.
8. ກວດອຸປະກອນອື່ນໆຂອງເຄື່ອງ Generator.
9. ທໍາການ Self-Test ຕົວເຄື່ອງ, ກວດ Battery ແລະ ອື່ນໆ.
10. ປ່ຽນຖ່າຍນໍ້າມັນເຄື່ອງ, ກອງກາຊວນ, ກອງອາກາດ, ກອງນໍ້າມັນເຄື່ອງ ແລະ ນໍ້າຢາຫຼໍ່ເຢັນ 01ຄັ້ງ/ປີ.
11. ບໍາລຸງຮັກສາອະນາໄມພາຍໃນ ແລະ ພາຍນອກຕົວເຄື່ອງ.

12. ສະຫຼຸບລາຍງານໃຫ້ ທຄຕລ ໃນການບຳລຸງຮັກສາແຕ່ລະຄັ້ງ.
13. ການເຂົ້າມາບຳລຸງຮັກສາຢ່າງໜ້ອຍ 6ຄັ້ງ/2ປີ (4ເດືອນ/ຄັ້ງ) ເຖິງວ່າຈະມີບັນຫາ ຫຼື ບໍ່ມີບັນຫາກໍ່ຕາມ.
14. ໜ້າວຽກອື່ນໆທີ່ຈຳເປັນໃນການບຳລຸງຮັກສາ Generator ໃຫ້ບໍລິສັດລະບຸມາ.
15. ຕ້ອງໃຫ້ຄຳແນະນຳ ແລະ ເຮັດລາຍການ ອາໄຫລ່ ສະເພາະທີ່ສຳຄັນທີ່ ຕ້ອງປ່ຽນຖ່າຍໃຫ້ ທາງ ທຄຕລ ຮັບຊາບ.

III. **ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນດັ່ງກ່າວມີຄວາມຕ້ອງການຍື່ນຊອງປະມູນລາຄາຕ້ອງປະກອບເອກະສານໃຫ້ຄົບຖ້ວນດັ່ງລຸ່ມນີ້:**

❖ **ເອກະສານ ຊອງທີ1 (ບໍ່ປິດຊອງ):**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ ຫຼື ໄຟຟ້າ, ດຳເນີນທຸລະກິດ ຢ່າງໜ້ອຍ 03 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດປີ 2025 ຫຼື 2026, ໃບຢັ້ງຢືນການເສຍອາກອນປີ 2024 ຫຼື 2025.
2. ເອກະສານລາຍລະອຽດປະສົບການ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້.
3. ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ **ວັນພະຫັດ, ວັນທີ 03/09//2026 ເວລາ 15:30 ໂມງ** ທີ່ພະແນກຫ້ອງການບໍລິຫານ ແລະ ການເງິນ ຊັ້ນ 04 ຕຶກ C ແລະ ສົ່ງທາງອີເມລ: phetsamone_s@bcel.com.la

❖ **ເອກະສານ ຊອງທີ2: (ປິດຊອງ)**

1. ໃບສະເໜີລາຄາຕ້ອງເປັນສະກຸນເງິນກີບ ແລະ ລວມອາກອນມູນຄ່າເພີ່ມ 10%.
2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 15/11/2026.) ຫຼື ແຊັກທີ່ວີຊ້າແລ້ວ/ແຊັກເງິນສົດ (ທຄຕລ ບໍ່ຮັບເງິນສົດ), ຜູ້ບໍ່ຊະນະການປະມູນພາຍຫຼັງປະກາດຜົນປະມູນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ, ສຳລັບຜູ້ຊະນະການປະມູນແມ່ນຈະສົ່ງຄືນພາຍຫຼັງເຊັນສັນຍາ.
3. ໃນວັນອັງຄານ **ວັນທີ 22/09/2026 ຕອນບ່າຍ ເວລາ 14:00 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນ, ໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5 ອາຄານ C;
4. ລາຄາທີ່ສະເໜີມາຕ້ອງເປັນລາຄາທີ່ສາມາດບໍລິການບຳລຸງຮັກສາເອງ ແລະ ບໍ່ໃຫ້ເປັນການປະມູນ ໃນນາມນາຍໜ້າ ຫຼື ຂາຍຕໍ່ໃຫ້ບໍລິສັດອື່ນ.

**ໝາຍເຫດ:**

- ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ, ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫລາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

IV. **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

1. ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ໃນໄລຍະ 02ປີ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສານ.
2. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງຮັບຜິດຊອບຄ່າເສຍຫາຍທັງໝົດໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ (ທຄຕລ ຈະບໍ່ສົ່ງເງິນຄ້ຳປະກັນການປະມູນ 10% ຄືນ);
3. ສຳລັບເຄື່ອງມືຮັບໃຊ້ທີ່ຕິດພັນກັບການບຳລຸງຮັກສາແຕ່ລະຄັ້ງ ເຊັ່ນ : ນ້ຳຢາ, ນ້ຳມັນ ແລະ ເຄື່ອງມືອື່ນໆ ແມ່ນ ບໍລິສັດເປັນຝ່າຍຮັບຜິດຊອບ.

4. ສຳລັບເຄື່ອງອຸປະກອນອາໄລ່ຕ່າງໆໃນການແກ້ໄຂບັນຫາເວລາເປ່ເພ ໃຫ້ບໍລິສັດ ຊີ້ແຈງລາຍລະອຽດເປັນລາຍລັກອັກສອນໃຫ້ຄົບຖ້ວນ ຫາ ທຄຕລ ເພື່ອຈະເປັນຜູ້ຈັດຊື້ ສ່ວນບໍລິສັດບຳລຸງຮັກສາຕ້ອງເປັນຜູ້ຕິດຕັ້ງ ແລະ ແກ້ໄຂໃຫ້.

5. ຖ້າເກີດມີບັນຫາໃນຊ່ວງໄລຍະການບຳລຸງຮັກສາ ທີ່ມາຈາກການກວດສອບທີ່ບໍ່ຄົບຖ້ວນ ບໍ່ຮອບຄອບຂອງບໍລິສັດ ມີການປ່ອຍປະລະເລີຍ ຫຼື ແກ່ຍາວໃນການແກ້ໄຂບັນຫາທີ່ທາງບໍລິສັດບໍ່ສາມາດ ອະທິບາຍ ຫລື ຊີ້ແຈງໄດ້ ທຄຕລ ມີສິດປັບໄໝໂດຍຄິດໄລ່ຈາກຄວາມເສຍຫາຍຕົວຈິງ.

**V. ການຊຳລະແມ່ນແບ່ງອອກເປັນ 06ງວດ/02ປີ ດັ່ງລຸ່ມນີ້:**

- **ງວດທີ 1**: ຊຳລະ 1/6 ຂອງມູນຄ່າ ພາຍໃນ 15 ວັນ ພາຍຫຼັງທີ່ເຂົ້າມາບຳລຸງຮັກສາຄັ້ງທີ 01 ແລະ ກວດກາຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ.
- **ງວດທີ 2**: ຊຳລະ 1/6 ຂອງມູນຄ່າ ພາຍໃນ 15 ວັນ ພາຍຫຼັງທີ່ເຂົ້າມາບຳລຸງຮັກສາ ຄັ້ງທີ 02 ແລະ ກວດກາຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ.
- **ງວດທີ 3**: ຊຳລະ 1/6 ຂອງມູນຄ່າ ພາຍໃນ 15 ວັນ ພາຍຫຼັງທີ່ເຂົ້າມາບຳລຸງຮັກສາ ຄັ້ງທີ 03 ແລະ ກວດກາຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ.
- **ງວດທີ 4**: ຊຳລະ 1/6 ຂອງມູນຄ່າ ພາຍໃນ 15 ວັນ ພາຍຫຼັງທີ່ເຂົ້າມາບຳລຸງຮັກສາ ຄັ້ງທີ 04 ແລະ ກວດກາຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ.
- **ງວດທີ 5**: ຊຳລະ 1/6 ຂອງມູນຄ່າ ພາຍໃນ 15 ວັນ ພາຍຫຼັງທີ່ເຂົ້າມາບຳລຸງຮັກສາ ຄັ້ງທີ 05 ແລະ ກວດກາຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ.
- **ງວດທີ 6**: ຊຳລະ 1/6 ຂອງມູນຄ່າ ພາຍໃນ 15 ວັນ ພາຍຫຼັງທີ່ເຂົ້າມາບຳລຸງຮັກສາ ຄັ້ງທີ 06 ແລະ ກວດກາຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ.

**ໝາຍເຫດ:** ການຄິດໄລ່ລາຄາບຳລຸງຮັກສາ ແມ່ນໃຫ້ບໍລິສັດຄິດໄລ່ຕາມຈຳນວນເຄື່ອງຈັກທີ່ໄປບຳລຸງຮັກສາຕົວຈິງ ເນື່ອງຈາກຈຳນວນເຄື່ອງຈັກອາດມີການເພີ່ມຂຶ້ນ ຫຼື ຫຼຸດ ລົງ ຍ້ອນການເປ່ເພ ( ບໍ່ສາມາດສ້ອມແປງໄດ້ ) ແລະ ກໍລະນີອື່ນໆ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນ.ສາຍສະໝອນ ຈັນທະຈັກ

ສອບຖາມຂໍ້ມູນເພີ່ມຕື່ມ:

020 77467722

020 23598956

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............./ທຄຕລ, ລົງວັນທີ .......................

| ລ/ດ | ຜູ້ສະໜອງ | **ເງື່ອນໄຂ** | | | | | ໝາຍເຫດ |
|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ທີ່ເຄີຍບຳລຸງຮັກສາ ໃຫ້ພາກສ່ວນໃດແນ່) | |
| 1 | ບ/ສ........ | ປີ.......... | ປີ.......... | ປີ.......... | .... ປີ | (ໃຫ້ລະບຸ) | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ບໍລິສັດ........................ (ເຊັນ ແລະ ຈ້ຳກາ)

ຜູ້ປະສານງານບໍລິສັດ:
ຊື່:
ໂທ: